ພຣະເຢຊູຄຣິດເຈົ້າຈະສະເດັດກັບມາໃນໂລກໃນໄວໆນີ້. ນີ້ແມ່ນພຣະສັນຍາຂອງພຣະອົງທີ່ພຣະອົງໃຫ້ໄວ້ຕັ້ງແຕ່ຕອນທີ່ພຣະອົງຊົງຢູ່ໃນໂລກນີ້ເມື່ອສອງພັນປີກ່ອນ(ໂຢຮັນ14:1-3). ຖ້າພຣະອົງຈະກັບແທ້ພວກເຮົາຈະຮູ້ຢ່າງໝັ້ນໃຈໄດ້ແນວໃດ? ຂໍໃຫ້ທ່ານທັງຫຼາຍຈົ່ງອ່ານການພະຍາກອນຕ່າງໆທີ່ພຣະເຢຊູເຈົ້າໄດ້ກ່າວໂດຍຕົວພຣະອົງເອງກ່ຽວກັບຍຸກສຸດທ້າຍ. ຕຶກຕອງຢ່າງລະມັດລະວັງໃນການອ່ານຂໍ້ພຣະຄຳເຫຼົ່ານີ້ແລະເພື່ອທ່ານຈະໄດ້ປຽບທຽບກັບເຫດການຕ່າງໆທີ່ກຳລັງເກີດຂຶ້ນໃນໂລກປະຈຸບັນນີ້ ເພື່ອພິສູດວ່າພຣະເຢຊູຈະກັບມາໃນຊ່ວງຊີວິດຂອງພວກເຮົາຢ່າງແນ່ນອນ.

## 1 ການທຳລາຍພຣະວິຫານ

ເມື່ອພຣະເຢຊູອອກໄປຈາກພຣະວິຫານແລະມີສາວົກຂອງພຣະອົງຄົນໜຶ່ງມາຫາພຣະອົງແລະທູນຖາມພຣະອົງວ່າ "ພຣະອາຈານເອີຍ ເບິ່ງແມ ສີລາແລະຕຶກເຫຼົ່ານີ້ໃຫຍ່ແທ້" ພຣະອົງຈຶ່ງຕັດກັບສາວົກຄົນນັ້ນວ່າ "ເຈົ້າເຫັນຕຶກທີ່ຍືດແໜ້ນເຫຼົ່ານີ້ບໍ? ຫຼືກ້ອນຫີນທີ່ຊ້ອນທັບກັນຢູ່ນີ້ຈະຖືກທຳລາຍ ຈົນບໍ່ເຫຼືອຈັກກ້ອນ" (ມັດທາຍ 24:1-2, ມາລະໂກ13:1-2, ລູກາ 21:5-6. ) **ເຫດການນີ້ໄດ້ສຳເລັດແລ້ວເມື່ອ ຄ.ສ.70.**

## 2 ໝາຍສຳຄັນຂອງການກັບມາ

ຕໍ່ມາ ເມື່ອພຣະອົງເຈົ້ານັ່ງຢູ່ເທິງພູໝາກກອກທີ່ກົງກັບອີກດ້ານໜຶ່ງຂອງພຣະວິຫານນັ້ນ ເປໂຕ, ໂຢຮັນແລະອັນເດອາໄດ້ມາຫາພຣະອົງເປັນການສ່ວນຕົວ.ແລະທູນຖາມພຣະອົງວ່າ "ພຣະອາຈານເອີຍ ບອກພວກຂ້ານ້ອຍແດ່ວ່າເຫດການເຫຼົ່ານີ້ຈະເກີດຂຶ້ນເມື່ອໃດ? ແລະສິ່ງໃດຈະເປັນໝາຍສຳຄັນວ່າເຫດການທັງໝົດເຫຼົ່ານີ້ຈະສຳເລັດ"(ມັດທາຍ24:3, ມາລະໂກ13:3-4, ລູກາ21:7)

## 3 ຜູ້ສອນປອມຈະເພີ່ມຂຶ້ນ

ພຣະເຢຊູເຈົ້າຕອບພວກເພິ່ນວ່າ: "ຈົ່ງລະວັງໃຫ້ດີຢ່າໃຫ້ຜູ້ໃດຜູ້ໜຶ່ງຫຼອກລວງພວກເຈົ້າ ໃຫ້ຫຼົງ ເພາະວ່າຈະມີຫຼາຍຄົນມາອ້າງນາມຂອງເຮົາໂດຍເວົ້າວ່າຂ້ອຍນີ້ແຫຼະເປັນພຣະຄຣິດ ແລະຈະຫຼອກລວງຫຼາຍຄົນໃຫ້ຫຼົງຫາຍ, ຢ່າຫຼົງເຊື່ອພວກເຂົາເລີຍ(ມັດທາຍ24:4-5, ມາລະໂກ13:5-6, ລູກາ21:8)

## 4 ສົງຄາມແລະຂ່າວລືເລື່ອງສົງຄາມຕ່າງໆ

ທ່ານທັງຫຼາຍຈະໄດ້ຍິນເລື່ອງສົງຄາມແລະຂ່າວລືເລື່ອງສົງຄາມ ຈົ່ງລະວັງໃຫ້ດີຢ່າຕື່ນຕົກໃຈເລີຍດ້ວຍວ່າສິ່ງເຫຼົ່ານີ້ຈຳຕ້ອງເກີດຂຶ້ນແລະຜ່ານໄປ, ແຕ່ເວລາສຸດທ້າຍຍັງບໍ່ມາຮອດ(ມທ 24:6, ມລກ13:7,ລກ21:9)

## 5 ສົງຄາມລະຫວ່າງຊາດ, ການອຶດຢາກ ໂລກລະບາດ ແລະແຜ່ນດິນໄຫວ

ປະເທດທັງຫຼາຍຈະສູ້ຮົບຂ້າຟັນກັນ, ອານາຈັກຕ່າງໆຈະຕໍ່ສູ້ກັນ, ການອຶດຢາກແລະແຜ່ນດິນໄຫວຈະເກີດຂຶ້ນຢູ່ບ່ອນຕ່າງໆ ແລະຈະມີໄພພິບັດອັນໜ້າຢ້ານກົວນັ້ນເປັນໝາຍສຳຄັນຈາກຟ້າສະຫວັນ (ມທ24:7, ມລກ13:8)

## 6

ເຫດການທັງປວງເຫຼົ່ານີ້ແມ່ນເປັນການເລີ່ມຕົ້ນຂອງຄວາມທຸກຍາກລຳບາກ (ມທ24:8, ມລກ13:8)

## 7 ການກົດຂີ່ຂົ່ມເຫັງຄຣິສຕຽນ

ກ່ອນໜ້າເຫດການເຫຼົ່ານີ້, ເຂົາຈະຈັບທ່ານທັງຫຼາຍໄປທໍລະມານແລະຖືກນຳໄປປະຫານຊີວິດ, ຂັງຄຸກແລະພວກເຂົາຈະໃຫ້ພວກເຈົ້າຢືນຢູ່ຕໍ່ໜ້າຜູ້ປົກຄອງ, ກະສັດ, ເຈົ້າເມືອງ, ຄົນທຸກຊາດຈະກຽດຊັງພວກທ່ານແລະຈະຂ້າທ່ານເສຍເພາະເຫັນແກ່ນາມຂອງເຮົາ ເຫດການນັ້ນຈະເກີດຂຶ້ນກັບທ່ານເພື່ອທ່ານຈະໄດ້ເປັນພະຍານກັບເຂົາ(ມທ24:9, ມລກ13:9, ລກ21:12-13)

## 8

ແຕ່ເມື່ອເຂົາມອບເຈົ້າໄວ້ນັ້ນພວກເຈົ້າຢ່າເປັນທຸກຮ້ອນໃຈວ່າຈະເວົ້າແນວໃດ, ແຕ່ຈົ່ງເວົ້າຕາມຖ້ອຍຄຳທີ່ພຣະເຈົ້າໂຜດໃຫ້ເຈົ້າເວົ້າ ເພາະວ່າບໍ່ແມ່ນເຈົ້າເອງເປັນຜູ້ເວົ້າ,ແຕ່ແມ່ນພຣະວິນຍານບໍລິສຸດເປັນຜູ້ນຳພາໃຫ້ເວົ້າ. ດ້ວຍວ່າເຮົາຈະໃຫ້ປາກແລະສະຕິປັນຍາແກ່ເຈົ້າເຊິ່ງສັດຕູຈະຕໍ່ສູ້ແລະຄັດຄ້ານບໍ່ໄດ້(ມລກ13:11,ລກ21:14-15)

## 9 ການທໍລະຍົດໃນຄອບຄົວ

ອ້າຍນ້ອງຕ່າງຄົນຈະມອບກັນແລະກັນໄວ້ ພໍ່ຈະມອບລູກ ແລະລູກຈະລຸກຂຶ້ນຕໍ່ສູ້ພໍ່ແມ່ໃຫ້ເຖິງແກ່ຄວາມຕາຍ ຄົນທັງຫຼາຍຈະກຽດຊັງພວກທ່ານ ເພາະເຫັນແກ່ນາມຂອງເຮົາ. ແຕ່ແມ່ນແຕ່ຜົມເສັ້ນໜຶ່ງໃນຫົວຂອງທ່ານກໍ່ບໍ່ຫຼົ່ນເສຍທ່ານຈະລອດພົ້ນໄດ້ເມື່ອທ່ານອົດທົນເຖິງທີ່ສຸດ. (ມລກ13:12-13, ລກ21:16-19)

## 10 ຄວາມຮັກຈະເຢັນລົງ

ຍ້ອນຄວາມຊົ່ວຮ້າຍແຜ່ກ້ວາງອອກ. ຄວາມຮັກຂອງຄົນທັງຫຼາຍຈະເຢັນລົງ, ແຕ່ຜູ້ທີ່ອົດທົນເຖິງທີ່ສຸດຜູ້ນັ້ນຈະລອດພົ້ນ (ມທ24:12-13)

## 11

ຂ່າວປະເສີດເລື່ອງອານາຈັກສະຫວັນຈະຖືກປະກາດອອກໄປທົ່ວໂລກເພື່ອເປັນພະຍານກັບທຸກຊົນຊາດຊົນເຜົ່າ, ຈາກນັ້ນທີ່ສຸດປາຍແຜ່ນດິນໂລກຈະມາເຖິງ (ມທ24:14, ມລກ13:10)

## 12 ຄວາມທຸກລຳບາກອັນໃຫຍ່ໃນເຢລູຊາເລັມ

ເມື່ອທ່ານເຫັນກອງທັບທັງຫຼາຍມາຕັ້ງອ້ອມຮອບກຸງເຢລູຊາເລັມເມື່ອນັ້ນໄພພິບັດໃກ້ເຂົ້າມາແລ້ວ(ລກ21:20). ເຫດສັນນັ້ນເມື່ອທ່ານທັງຫຼາຍຈະໄດ້ເຫັນສິ່ງປະຫຼາດອັນໜ້າຢ້ານທີ່ເຮັດໃຫ້ວິບັດຕັ້ງຢູ່ໃນພຣະວິຫານຂອງພຣະເຈົ້າຕາມທີ່ຜູ້ທຳນວາຍດານິເອນໄດ້ກ່າວໄວ້.(ຜູ້ໃດທີ່ອ່ານໃຫ້ຜູ້ນັ້ນເຂົ້າໃຈເອົາເອງ) ເມື່ອນັ້ນຜູ້ທີ່ຢູ່ແຂວງຢູດາຍຈະປົບໜີໄປຍັງພູເຂົາທັງຫຼາຍຜູ້ທີ່ຢູ່ເທິງຫຼັງຄາເຮືອນບໍ່ຕ້ອງລົງມາເອົາສິ່ງຂອງອອກໄປ, ສ່ວນຜູ້ທີ່ຢູ່ທົ່ງນາຢ່າກັບມາເອົາເສື້ອຜ້າຂອງຕົນ (ມທ24:15-18) ໃນວັນເຫຼົ່ານັ້ນຈະເປັນໜ້າເວດທະນາສົງສານຜູ້ຍິງຖືພາແລະແມ່ລູກອ່ອນທີ່ກິນນົມຢູ່ ຈົ່ງພາວະນາອະທິຖາຂໍຈາກພຣະເຈົ້າເພື່ອການທີ່ພວກເຈົ້າປົບໜີນັ້ນຈະບໍ່ຖືກລະດູໜາວຫຼືວັນຊະບາໂຕ (ມທ19:20) ແລະພວກເຂົາຈະລົ້ມລົງດ້ວຍຄົມດາບແລະຖືກກວາດໄປເປັນຊະເລີຍທົ່ວປະຊາຊາດແລະຄົນທຸກຊາດຈະຢຽບຢໍ່າກຸງເຢລູຊາເລັມຈົນກ່ວາເວລາຂອງຄົນຕ່າງຊາດນັ້ນຈະຄົບຖ້ວນ (ລກ21:24)

## 13 ເວລາແຫ່ງຄວາມທຸກລຳບາກຂອງຢາໂຄບ

(ຢລມ30:6-7)

ດ້ວຍວ່າເວລານັ້ນຈະເກີດຄວາມຍາກລຳບາກອັນໃຫຍ່ຢ່າງທີ່ບໍ່ເຄີຍມີມາຕັ້ງແຕ່ແຮກສ້າງໂລກຈົນມາຮອດເວລານີ້ ແລະຈະບໍ່ມີອີກຕໍ່ໄປ ແລະຖ້າພຣະເຈົ້າບໍ່ເຮັດໃຫ້ວັນເຫຼົ່ານັ້ນສັ້ນເຂົ້າຈະບໍ່ມີມະນຸດຄົນໃດພົ້ນໄດ້ ແຕ່ເພື່ອເຫັນແກ່ ຜູ້ທີ່ພຣະອົງຊົງເລືອກ, ພຣະອົງຈະເຮັດໃຫ້ວັນເຫຼົ່ານັ້ນສັ້ນເຂົ້າ. (ມທ24:21-22). ແຕ່ວັນເຫຼົ່ານັ້ນເປັນວັນແຫ່ງການແກ້ແຄ້ນເພື່ອຈະໃຫ້ສິ່ງສາລະພັດທີ່ໄດ້ຖືກບັນທຶກໄວ້ນັ້ນສຳເລັດ. (ລກ21:22)

## 14 ພຣະຄຣິດທຽມແລະຜູ້ເຜີຍພະວັດຈະນະທຽມ

ເວລານັ້ນ ຖ້າມີຜູ້ໃດເວົ້າກັບພວກເຈົ້າວ່າ ເບິ່ງແມພຣະຄຣິດຢູ່ທີ່ນີ້. ຫຼືຢູ່ທີ່ນັ້ນ ຢ່າສູ່ເຊື່ອດ້ວຍວ່າຈະມີພຣະຄຣິດປອມແລະຜູ້ທຳນາຍປອມຫຼາຍຄົນເກີດຂຶ້ນພວກເຂົາຈະເຮັດການອັດສະຈັນອັນຍິ່ງໃຫຍ່ແລະຈະຫຼອກລວງໄພ່ພົນຂອງພຣະເຈົ້າໃຫ້ຫຼົງໄປ, ແຕ່ຈົ່ງຟັງເອົານີ້ແຫລະ ເຮົາໄດ້ບອກພວກເຈົ້າໃຫ້ຮູ້ກ່ອນແລ້ວ (ມທ24:23-24) ສະນັ້ນຖ້າມີຄົນບອກພວກເຈົ້າວ່າເພິ່ນອອກໄປທີ່ແຫ້ງແລ້ງກັນດານພຸ້ນ ພວກເຈົ້າຢ່າສູ່ໄປຫຼືຖ້າມີຄົນບອກພວກເຈົ້າວ່າ ເບິ່ງແມະ ເພິ່ນລີ້ຢູ່ໃນຫ້ອງກໍ່ຢ່າໄດ້ເຊື່ອ ດ້ວຍວ່າ ບຸດມະນຸດຈະມາເໝືອນຟ້າແມບເຫຼື້ອມສິ່ງຂ້າມທົ່ວທ້ອງຟ້າຈາກທິດຕາເວັນອອກຫາທິດຕາເວັນຕົກສັນໃດ ບຸດມະນຸດຈະສະເດັດມາສັນນັ້ນ (ມທ24:26-27, ລກ17:23-24)

## 15 ໝາຍສຳຄັນໃນຟ້າສະຫວັນ

ພໍໝົດຄວາມທຸກຍາກລຳບາກຂອງວັນເຫຼົ່ານັ້ນແລ້ວດວງຕາເວັນຈະມືດໄປ ດວງເດືອນຈະບໍ່ສ່ອງແສງອີກຕໍ່ໄປດວງດາວທັງຫຼາຍຈະຕົກຈາກທ້ອງຟ້າ. ແລະລິດອຳນາດທົ່ວທ້ອງຟ້າຈະສັ່ນສະທ້ານຫວັ່ນໄຫວ (ມທ24:29) ຈະມີ ໝາຍສຳຄັນຈາກດວງຕາເວັນ, ດວງເດືອນແລະ ດວງດາວທັງປວງ, ແລະຈະມີຄວາມທຸກຮ້ອນເທິງແຜ່ນດິນໂລກຕາມປະເທດຕ່າງໆເຊິ່ງມີຄວາມສະງົບສິນເທເພາະສຽງກ້ອງອັນໃຫຍ່ຫລວງຂອງທະເລແລະຄື້ນຟອງມະນຸດຈະຫຼົບໜີໄປຍ້ອນຄວາມຢ້ານແລະຄອຍເບິ່ງເຫດການຕ່າງໆທີ່ກຳລັງເກີດຂຶ້ນທົ່ວເທິງແຜ່ນດິນໂລກ (ລກ21:25-26)



16 **ໝາຍສຳຄັນຂອງບຸດມະນຸດຈະປະກົດຂຶ້ນໃນທ້ອງຟ້າ** ແລະມະນຸດທຸກຊາດທົ່ວໂລກຈະຕີເອິກຮ້ອງໄຫ້ຄ່ຳຄວນ ແລະເຫັນບຸດມະນຸດກຳລັງມາເທິງເມກໃນທ້ອງຟ້າ ດ້ວຍລິດທານຸພາບແລະສະຫງ່າລາສີອັນໃຫຍ່ ພຣະອົງຈະໃຊ້ເຫຼົ່າເທວະດາຂອງພຣະອົງອອກໄປ ດ້ວຍສຽງແກດັງສະນັ່ນຈາກທິດທັງສີ່ ເພື່ອເຕົ້າໂຮມເອົາປະຊາຊົນຜູ້ທີ່ຣະອົງຊົງເລືອກໄວ້ ຕັ້ງແຕ່ສຸດຂອບຟ້າເບື້ອງນັ້ນຈົນຮອດຂອບຟ້າເບື້ອງນີ້. (ມທ24:30-31, ມລກ13:26-27, ລກ21:27)

17 ເມື່ອເຫດການເຫຼົ່ານີ້ເລີ່ມເກີດຂຶ້ນ ພວກເຈົ້າຈົ່ງລຸກຢືນແລະເງີຍໜ້າຂຶ້ນ ເພາະຄວາມລອດພົ້ນຂອງພວກເຈົ້າໃກ້ຈະມາຮອດແລ້ວ (ລກ21:28)

18 ແລະພຣະອົງໄດ້ກ່າວວ່າ: ຈົ່ງພິຈາລະນາຈາກຕົ້ນໝາກເດື່ອ ແລະຕົ້ນໄມ້ທັງຫຼາຍ ເມື່ອພວກເຈົ້າທັງຫຼາຍເຫັນໃບຂອງມັນເລີ່ມປົ່ງ ພວກເຈົ້າຈະຮູ້ໄດ້ວ່າໃກ້ຈະເຖິງລະດູຮ້ອນແລ້ວ, ຢ່າງດຽວກັນນີ້ແຫຼະ ເມື່ອພວກເຈົ້າເຫັນເຫດການເຫຼົ່ານີ້ກຳລັງເກີດຂຶ້ນ ພວກເຈົ້າຈົ່ງຮູ້ໄວ້ວ່າ ອານາຈັກຂອງພຣະເຈົ້າໃກ້ຈະມາຮອດແລ້ວ (ມທ24:32-33, ລກ 21:19-31) ແຕ່ວັນແລະໂມງນັ້ນບໍ່ມີໃຜຮູ້ ບັນດາທູດສະຫວັນໃນສະຫວັນຫຼື ພຣະບຸດກໍ່ບໍ່ຮູ້ ມີແຕ່ພຣະບິດາອົງດຽວເທົ່ານັ້ນທີ່ຮູ້ (ມທ24:36, ມລກ13:32)

19 ໃນສະໄໝຂອງໂນອາເປັນຢ່າງໃດ ການສະເດັດມາຂອງບຸດມະນຸດກໍ່ເປັນຢ່າງນັ້ນ ກ່ອນນ້ຳຖ້ວມໂລກນັ້ນ ມະນຸດກໍ່ກິນແລະດື່ມ ແລະໄດ້ເອົາກັນເປັນຜົວເມຍ ຈົນເຖິງວັນທີ່ໂນອາເຂົ້າໄປໃນເຮືອ, ນ້ຳກໍ່ໄດ້ກວາດເອົາພວກເຂົາໄປຈົນໝົດສິ້ນ ໂດຍບໍ່ທັນຮູ້ໂຕສັນໃດ ເມື່ອບຸດມະນຸດສະເດັດກັບມາກໍ່ຈະເປັນຢ່າງນັ້ນ (ທມ24:37-39)

20 **ໃນສະໄໝຂອງໂລດກໍ່ເໝືອນກັນ**: ພວກເຂົາໄດ້ກິນ, ໄດ້ດື່ມ, ໄດ້ຊື້, ໄດ້ຂາຍ, ພວກເຂົາໄດ້ມີການຫວ່ານແລະປູກ ແລະໄດ້ມີການກໍ່ສ້າງຕ່າງໆ. ແຕ່ມື້ທີ່ໂລດໄດ້ກ້າວອອກຈາກເມືອງໂຊໂດມນັ້ນ ໄຟແລະມາດໄດ້ຕົກຈາກຟ້າ ແລະເຜົາຜານທຸກສິ່ງຢ່າງໃຫ້ຈິບຫາຍໄປ. ໃນວັນທີ່ບຸດມະນຸດຈະມາກໍ່ເປັນຢ່າງນັ້ນແຫຼະ.(ລກ17:28-30)

21 ເມື່ອລະນຶກເຖິງເມຍຂອງໂລດ. ຜູ້ໃດກໍ່ຕາມທີ່ຈະພະຍາຍາມຮັກສາຊີວິດສຳລັບຕົນເອງ ຜູ້ນັ້ນຈະເສຍຊີວິດ ແຕ່ຜູ້ໃດຍອມເສຍຊີວິດຜູ້ນັ້ນຮັກສາຊີວິດໃຫ້ພົ້ນ (ລກ17:32-33)

22 ເຮົາບອກພວກທ່ານວ່າ ໃນຄືນນັ້ນ ຈະມີຊາຍສອງຄົນນອນຢູ່ເທິງຕຽງ: ຄົນໜຶ່ງຈະຖືກຮັບໄປແລະປະຄົນໜຶ່ງໄວ້. ຜູ້ຍິງສອງຄົນກຳລັງໂມ້ແປ້ງຢູ່ນຳກັນ ຈະຮັບຄົນໜຶ່ງໄປ ແລະປະຄົນນຶ່ງໄວ້. ຊາຍສອງຄົນທີ່ຢູ່ທີ່ງນາ ຈະຊົງຮັບຄົນໜຶ່ງໄປແລະປະຄົນໜຶ່ງໄວ້ (ມທ24:28, ລກ17:37)

23 **ຈົ່ງເຝົ້າລະວັງແລະອະທິຖານ**
ປຽບເໝືອນຜູ້ຊາຍຄົນໜຶ່ງທີ່ອອກເດີນທາງໄກ ເພິ່ນອອກຈາກເຮືອນຂອງເພິ່ນ ແລະໄດ້ມອບອຳນາດໃຫ້ກັບບັນດາຄົນຮັບໃຊ້ຂອງເພິ່ນ ໃຫ້ຮັບຜິດຊອບແຕ່ລະໜ້າທີ່ໃຜລາວ ແລະສັ່ງຄົນເຝົ້າປະຕູຍາມເຮືອນໄວ້ໃຫ້ດີ. ດັ່ງນັ້ນ ຈົ່ງເຝົ້າລະວັງຕຽມພ້ອມຢູ່ ເພາະທ່ານບໍ່ຮູ້ວ່າ ພຣະອົງເຈົ້າ ຫຼື ເຈົ້າຂອງເຮືອນຈະສະເດັດມາໃນເວລາໃດ ອາດຈະມາຫົວຄ່ຳ ຫຼືທ່ຽງຄືນ, ຫຼື ຕອນຂ້ອນແຈ້ງ ຫຼືຕອນເຊົ້າ ຫຼື ຢ້ານວ່າຈະມາໃນທັນທີແລະພົບພວກທ່ານນອນຫຼັບຢູ່ (ມລກ13:34-36)

24 ແຕ່ຈົ່ງເຂົ້າໃຈຢ່າງນີ້. ຖ້າເຈົ້າຂອງເຮືອນຮູ້ກ່ອນວ່າ ໂຈນຈະມາຍາມໃດ ເພິ່ນຈະເຝົ້າລະວັງໄວ້ບໍ່ໃຫ້ໂຈນເຈາະເຂົ້າເຮືອນຂອງຕົນໄດ້. ເຫດສະນັ້ນ ພວກທ່ານກໍ່ເໝືອນກັນຈົ່ງຕຽມພ້ອມຢູ່ສະເໝີ ເພາະວ່າບຸດມະນຸດຈະມາໃນໂມງທີ່ພວກເຈົ້າບໍ່ຄາດຄິດ (ມທ24:33-34)

25 ຈົ່ງລະວັງຕົວໃຫ້ດີ, ຢ່າໃຫ້ຈິດໃຈຂອງພວກເຈົ້າທັງຫຼາຍໜັກໄປທາງການກິນ ແລະການດື່ມ ແລະການວິຕົກກັງວົນເຖິງຊີວິດນີ້, ບໍ່ດັ່ງນັ້ນແລ້ວວັນນັ້ນກໍ່ຈະຫຼອນມາຕົກຖືກພວກເຈົ້າຢ່າງບໍ່ຄາດຄິດ. ດ້ວຍວ່າ ວັນແລະເວລານັ້ນຈະມາຖືກມະນຸດທັງຫຼາຍ ໃນທົ່ວໂລກເໝືອນຄ່ວງແຫໃສ່ປາ. ດັ່ງນັ້ນ ຈົ່ງເຝົ້າລະວັງແລະອະທິຖານຢູ່ທຸກເວລາ (ມລກ13:33, ລກ21:34-45)

26 ສິ່ງທີ່ເຮົາໄດ້ກ່າວແກ່ທ່ານທັງຫຼາຍ ກໍ່ກ່າວກັບທຸກໆຄົນເໝືອນກັນ: ຈົ່ງເຝົ້າລະວັງແລະອະທິຖານຢູ່ທຸກເວລາ ເພື່ອວ່າພວກເຈົ້າຈະມີກຳລັງພົ້ນຈາກເຫດການການເຫຼົ່ານີ້ທີ່ຈະເກີດຂຶ້ນນັ້ນ ແລະຢືນຢູ່ຕໍ່ໜ້າບຸດມະນຸດໄດ້ (ລກ21:36)

27 ເຮົາບອກພວກເຈົ້າຕາມຄວາມຈິງວ່າ, ເຫດການເຫຼົ່ານີ້ຈະເກີດຂຶ້ນ ກ່ອນຄົນສະໄໝນີ້ຕາຍໄປໝົດ, ຟ້າແລະດິນກໍ່ຈະລ່ວງພົ້ນໄປ ແຕ່ຖ້ອຍຄຳຂອງເຮົາຈະບໍ່ລ່ວງພົ້ນໄປຈັກເທື່ອ.(ມທ24:34-35, ມລກ13:30-31, ລກ21:32-33)

ກະສັດຜູ້ຍິ່ງໃຫຍ່ສູງສຸດໄດ້ປະທັບຢູ່ເໜືອບັນລັງ
ແຫ່ງສະຫງ່າລາສີ -
ພຣະເຢຊູເຈົ້າຈະສະເດັດກັບມາໃນໄວໆນີ້
ດ້ວຍລິດທານຸພາບແລະກຽດອັນສະຫງ່າລາສີ
ພ້ອມກັບຝູງເທວະດາແລະພວກນັກບຸນທັງຫຼາຍຜູ້ບໍລິສຸດ.

"ຈົ່ງຢຳເກງພຣະເຈົ້າ ແລະຖວາຍກຽດແດ່ພຣະອົງ
ເພາະເຖິງເວລາທີ່ພຣະອົງຈະພິພາກສາແລ້ວ
ແລະຈົ່ງນະມັດສະການພຣະອົງ
ຜູ້ທີ່ຊົງສ້າງຟ້າສະຫວັນແລະແຜ່ນດິນໂລກ,
ທະເລ ແລະນ້ຳພຸທັງຫຼາຍ" (ພຣະນິມິດ 14:7)

**ອີກບໍ່ດົນເວລານັ້ນຈະມາເຖິງ**
ອານາຈັກສະຫວັນຫຍັບເຂົ້າມາໃກ້ແລວ.
ຈົ່ງກັບໃຈໃໝ່ແລະເຊື່ອໃນຂ່າວປະເສີດນີ້.

ຕຽມຕົວໃຫ້ພ້ອມທີ່ຈະພົບກັບພຣະຜູ້ເປັນເຈົ້າຂອງທ່ານ.

ເບິ່ງ ANGEL TV
www.angeltv.org

ທີ່ຢູ່ຕິດຕໍ່ຂອງທ້ອງຖິ່ນ



# ຂ່າວປະເສີດເລື່ອງລາຊະອານາຈັກຂອງພຣະເຈົ້າ

ລາວ | LAO